ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 011 /ສພຊ

# ມະຕິຕົກລົງ

ຂອງສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍການໃຫ້ສັດຕະຍາບັນ

------------

- ອີງຕາມລັດຖະທຳມະນູນສະບັບປັບປຸງມາດຕາ 53 ຂໍ້ 11 ແລະ ມາດຕາ 26 ຂໍ້ 17 ຂອງ ກົດໝາຍ ວ່າດ້ວຍສະພາແຫ່ງຊາດທີ່ໄດ້ກຳນົດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ.
- ອີງຕາມໜັງສືສະເໜີຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເຖິງທ່ານປະທານ ສະພາແຫ່ງຊາດ, ສະບັບເລກທີ 132/ນຍ,ລົງວັນທີ 30 ກັນຍາ 2013.
- ອີງຕາມການຕົກລົງເຫັນດີ ຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 24 ຕຸລາ 2013.

## ສະພາແຫ່ງຊາດຕົກລົງ:

<u>ມາດຕາ 01</u>. ຮັບຮອງເອົາຂໍ້ຕົກລົງລະຫວ່າງລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ວ່າດ້ວຍການ ແກ້ໄຂບັນຫາຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ.ສະບັບລົງວັນທີ 08 ກໍລະກົດ 2013

<u>ມາດຕາ 02</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ປະທານຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ,ວັນທີ 31 / 10 /2013

ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ

ປະທານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ — ເລກທີ: 0262 /ທສພຊ

ຫ້ອງວ່າການສະພາແຫ່ງຊາດ — ນະຄອນຫລວງວຽງຈັນ, ວັນທີ 1 ກໍລະກົດ 2013

# ແຈ້ງການ

ຮຽນ: ທ່ານຫົວໜ້າຫ້ອງວ່າການ ລັດຖະບານ

ເລື່ອງ: ການພິຈາລະນາຮັບຮອງເອົາ ຂໍ້ຕົກລົງລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສ.ສ.ຫວຽດນາມ ວ່າດ້ວຍການແກ້ໄຂບັນຫາ ຜູ້ຍົກຍ້າຍຕັ້ງພູມລຳເນົາ ຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ.

- ອີງຕາມ ໜັງສືສະເໜີຂອງ ທ່ານນາຍົກລັດຖະມົນຕີ ສະບັບເລກທີ 83/ນຍ,ລົງວັນທີ 29 ພຶດສະພາ 2013.
- ອີງຕາມ ການຕົກລົງ ຂອງ ກອງປະຊຸມ ຄະນະປະຈຳສະພາແຫ່ງຊາດ, ຄັ້ງ ວັນທີ 28 ມິຖຸນາ 2013.

ຫ້ອງວ່າການ ສະພາແຫ່ງຊາດ, ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຄະນະປະຈຳສະພາແຫ່ງຊາດ ໄດ້ພິຈາລະນາຄົ້ນຄວ້າເອກະສານຮ່າງ ຂໍ້ຕົກລົງດັ່ງກ່າວແລ້ວ, ແລະ *ເຫັນດີໃຫ້ລັດຖະບານ ນຳໄປ ປຶກສາຫາລື ແລະ ລົງລາຍເຊັນເອກະສານ ດັ່ງກ່າວ ກັບຝ່າຍ ສ.ສ. ຫວຽດນາມ* (ຮ່າງເອກະສານ ສະບັບປັບປຸງ ທີ່ໄດ້ລັດຕິດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຊາບ ຕາມທາງຄວນ.

ຫົວໜ້າຫ້ອງວ່າການ

ດຣ. ອຸ່ນແກ້ວ ວຸທັລາດ

ບ່ອນນຳສົ່ງ ເພື່ອຊາບ

1. ຫ້ອງວ່າການປະທານປະເທດ_01 ສບ
2. ຫ້ອງວ່າການສູນກາງພັກ_01 ສບ
3. ຄະນະປະຈຳສະພາແຫ່ງຊາດ ທ່ານລະ 01 ສບ
4. ຫ້ອງການຄະນະກຳມະການຊາຍແດນແຫ່ງຊາດ(ຕປທ) 01 ສບ
5. ເກັບມ້ຽນ 02 ສບ